ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ
ພະແນກ ເຕັກໂນໂລຊີ ແລະ ການສື່ສານ

ເລກທີ: 582/ພຕສ
ອຸດົມໄຊ, ວັນທີ: 10 ພະຈິກ 2026

# ແຈ້ງການ
## ຮັບສະໝັກສອບເສັງເພື່ອຄັດເລືອກລັດຖະກອນໃໝ່ ປີ 2026

**ເຖິງ:** ບັນດາທ່ານນັກສຶກສາ ທີ່ຮຽນຈົບວິຊາສະເພາະ ມີຄວາມສົນໃຈຢາກສະໝັກສອບເສັງຄັດເລືອກເຂົ້າເຮັດວຽກ ຢູ່ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ.
**ເລື່ອງ:** ຮັບສະໝັກສອບເສັງຄັດເລືອກເຂົ້າເປັນລັດຖະກອນໃໝ່ ປີ 2026.

- ອີງຕາມ ຂໍ້ຕົກລົງຂອງ ປະທານຄະນະກຳມະການປົກຄອງແຂວງ ສະບັບເລກທີ 193/ຄປຂ, ລົງວັນ 20 ກຸມພາ 2026 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ ອຸດົມໄຊ;
- ອີງຕາມ ໜັງສືແຈ້ງການ ຂອງກົມຈັດຕັ້ງ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 2048/ຈຕ, ລົງວັນທີ 04 ພະຈິກ 2026.

ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງມາຍັງນັກສຶກສາທີ່ຮຽນຈົບວິຊາສະເພາະ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ຍັງບໍ່ທັນມີວຽກເຮັດ ມີຄວາມສົນໃຈຢາກສະໝັກເຂົ້າເປັນລັດຖະກອນ ຢູ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ໃຫ້ເຂົ້າມາພົວພັນສອບຖາມຂໍ້ມູນ ຫຼື ສະໝັກຜ່ານທາງອອນລາຍ ຕາມມາດຖານ ແລະ ເງື່ອນໄຂ ດັ່ງລຸ່ມນີ້:

**I. ວິຊາສະເພາະທີ່ຕ້ອງການ**

1. ສາຂາວິຊາ ວິສະວະກຳຄອມພິວເຕີ;
2. ສາຂາວິຊາ ວິທະຍາສາດຄອມພິວເຕີ;
3. ສາຂາວິຊາ ເຕັກໂນໂລຊີຂໍ້ມູນຂ່າວສານ (IT) ຫຼື ຄຸ ສາຂາວິຊາ ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ (ICT);
4. ສາຂາວິຊາ ປັນຍາປະດິດ (AI);
5. ສາຂາວິຊາ ວິສະວະກຳເອເລັກໂຕຣນິກ;
6. ແລະ ສາຂາອື່ນໆ ທີ່ໃກ້ຄຽງ.

**II. ມາດຖານ ແລະ ເງື່ອນໄຂຜູ້ສະໝັກ**

1. ຖືສັນຊາດລາວໂດຍກຳເນີດ ຫຼື ຮັບສັນຊາດລາວ ແຕ່ 3 ປີຂຶ້ນໄປ. ມີອາຍຸ 18 ປີ ຂຶ້ນໄປ ແຕ່ບໍ່ເກີນ 35 ປີ;
2. ເປັນພົນລະເມືອງດີ, ມີຄຸນສົມບັດດີ, ມີຄວາມຈົ່ງຮັກພັກດີ ຕໍ່ລະບອບປະຊາທິປະໄຕປະຊາຊົນ;
3. ມີປະຫວັດການກຳເນີດ, ການເຄື່ອນໄຫວຂອງຕົນເອງ ແລະ ຄອບຄົວຈະແຈ້ງ;
4. ມີວຸດທິການສຶກສາ ດ້ານວິຊາສະເພາະ ຊັ້ນສູງຂຶ້ນໄປ ຕາມສາຂາວິຊາສະເພາະທີ່ຕ້ອງການ;


ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ສຳນັກງານຕັ້ງຢູ່: ບ້ານດອນໄຊ, ເມືອງໄຊ, ແຂວງອຸດົມໄຊ
www.dtc-odx.gov.la / dtc@ou.gov.la

5. ບໍ່ພົວພັນສິ່ງເສບຕິດທຸກຊະນິດ, ບໍ່ເຄີຍຖືກສານປະຊາຊົນຕັດສິນລົງໂທດ, ຕັດອິດສະຫຼະພາບ ໃນສະຖານການທຳຜິດໂດຍເຈດຕະນາ, ບໍ່ຖືກປະຕິບັດວິໄນໄລ່ອອກ ຈາກອົງການຈັດຕັ້ງພັກ, ລັດ, ລັດວິສາຫະກິດ, ບໍລິສັດເອກະຊົນ ຫຼື ອົງການຈັດຕັ້ງສາກົນ;
6. ມີຄວາມຮູ້ດ້ານພາສາຕ່າງປະເທດໃດໜຶ່ງ ຄື: ພາສາອັງກິດ, ຈີນ ຫຼື ຫວຽດນາມ ໃນລະດັບດີ ຈະພິຈາລະນາເປັນພິເສດ;
7. ມີສຸຂະພາບແຂງແຮງດີ;
8. ເປັນຄົນທ້ອງຖິ່ນ ຢູ່ແຂວງອຸດົມໄຊ, ມີບ່ອນພັກເຊົາ ແລະ ມີພາຫະນະທຽວການກຸ້ມຕົນເອງ.

**III. ເອກະສານປະກອບການສະໝັກ**

1. ໃບຄຳຮ້ອງສະໝັກສອບເສັງ ຈຳນວນ 01 ຊຸດ;
2. ຊີວະປະຫວັດຫຍໍ້ ຈຳນວນ 01 ຊຸດ;
3. ສຳເນົາໃບປະກາສະນີຍະບັດ ແລະ ໃບຄະແນນ ຈຳນວນ 01 ຊຸດ;
4. ສຳລັບຜູ້ທີ່ຈົບມາຈາກຕ່າງປະເທດຕ້ອງມີໃບຢັ້ງຢືນທຽບໃບປະກາສະນີຍາບັດ ຈາກກະຊວງສຶກສາທິການ ແລະ ກິລາ ຈຳນວນ 01 ຊຸດ;
5. ໃບຢັ້ງຢືນການຝຶກງານ (ຖ້າຜ່ານການຝຶກງານ) ຈຳນວນ 01 ຊຸດ;
6. ສຳເນົາສຳມະໂນຄົວ ແລະ ສຳເນົາບັດປະຈຳຕົວ ຈຳນວນ 01 ຊຸດ;
7. ໃບແຈ້ງໂທດ ຈຳນວນ 01 ຊຸດ;
8. ໃບຢັ້ງຢືນສຸຂະພາບ ຈຳນວນ 01 ຊຸດ;
9. ໃບຢັ້ງຢືນທີ່ຢູ່ ຈຳນວນ 01 ຊຸດ;

**ໝາຍເຫດ:** ເອກະສານທີ່ສຳເນົາທຸກສະບັບ ໃຫ້ສຳເນົາສີ;

ຖ້າມີຄວາມສົນໃຈ ສາມາດປະກອບເອກະສານສຳເນົາ (Soft Copy) ສະໝັກທາງອອນລາຍ ຜ່ານເວັບໄຊ www.db.dtc-odx.gov.la/apply ພາຍຫຼັງສະໝັກອອນລາຍສຳເລັດແລ້ວ ໃຫ້ເຂົ້າມາສົ່ງເອກະສານສະໝັກ (ສະບັບເຈ້ຍ) ດ້ວຍຕົນເອງ ທີ່ຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ, ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ໃນໂມງລັດຖະການ. ເວລາມາສົ່ງເອກະສານສະໝັກໃຫ້ຖືໃບປະກາສະນີຍະບັດ ແລະ ໃບຄະແນນ ຕົ້ນສະບັບ ມາພ້ອມ. **ເລີ່ມເປີດຮັບສະໝັກແຕ່ວັນທີ 10 ພະຈິກ 2026 ແລະ ປິດຮັບສະໝັກ ຫຼື ຄຳຮ້ອງ ວັນທີ 19 ພະຈິກ 2026.** ສຳລັບວັນເວລາສອບເສັງຄັດເລືອກຈະແຈ້ງໃຫ້ຊາບຕາມທີ່ຫຼັງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດານັກສຶກສາ ທີ່ມີຄວາມສົນໃຈ ເພື່ອຊາບ ແລະ ມາຍື່ນເອກະສານສະໝັກຕາມວັນເວລາທີ່ໄດ້ກຳນົດໄວ້.

**ຫົວໜ້າພະແນກ**

ດາວໂຫຼດເອກະສານສະໝັກ

ນ. ປິ່ນຄຳ ອຸ່ນລະຄອນ


ຕິດຕໍ່ພົວພັນ:
ທ່ານ ເຊັ້ງລີ ເຊຍເຢ ເບີໂທ: 020 2928 9822
ນາງ ນ້ອຍມະນີ ພູມປັນຍາ ເບີໂທ: 020 5854 5252